# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 10 ຕຸລາ 2024 (10-20-2024)

---

## ອັບຣາມແລະໂລດ: ສິດທິຄອບຄົວ

**ຈຸດສຳຄັນໃນບົດຮຽນ:** ຈົ່ງວາງໃຈໃນພຣະເຈົ້າເມື່ອຖືກທ້າທາຍຕໍ່ສິດທິຫຼືຊັບສົມບັດຕ່າງໆຂອງທ່ານ.

**ພຣະຄັມພີຕອບສນອງຊີວິດ:**

ເປີດເບິ່ງເກືອບທຸກແຫຼ່ງສື່ມວນຊົນສັງຄົມ, ສື່ຂ່າວຄາວໃໝ່, ຫຼືສື່ມວນຊົນແບບດັ້ງເດີມແລະທ່ານຈະພົບເຫັນເວທີທີ່ເຮັດໃຫ້ມີຄວາມຂັດແຍ້ງ, ການໂຕ້ວາທີ, ແລະການກ່າວດ່ງວ, ໂດຍສະເພາະໃນປີການເລືອກຕັ້ງເຊັ່ນນີ້. ມັນເບິ່ງຄືວ່າການກ່າວທີ່ເປັນປໂຍດຕໍ່ສັງຄົມແລະການຟັງໄດ້ກາຍເປັນສິລປະທີ່ສູນເສັຽໄປແລ້ວ. ເຣື່ອງລາວຂອງອັບຣາມແລະໂລດ ພິສູດວ່າບາງສິ່ງບາງຢ່າງກ່ຽວກັບທັມມະຊາດຂອງມະນຸດບໍ່ເຄີຍປ່ຽນແປງ. ພວກເຮົາໄດ້ຍິນບັນດາຜູ້ຄົນເວົ້າເລື້ອຍໆວ່າ: **"ຖ້າທ່ານບໍ່ປ້ອງກັນຕົວເອງ, ແມ່ນໃຜຈະປ້ອງກັນທ່ານ?"** ມັນເປັນການໂນ້ມອຽງຂອງການຮັກສາຕົນເອງທີ່ມັກຈະເປັນສິ່ງທີ່ກຳນົດຄວາມສັມພັນທະພາບໃນແຕ່ລະວັນ. ອີງຕາມຜູ້ປຶກສາຄອບຄົວຈະເວົ້າວ່າ: "ທ່ານຕ້ອງການທີ່ຈະຖືກຕ້ອງ, ຫຼື ທ່ານຕ້ອງການທີ່ຈະແຕ່ງງານ?" ບາງຄັ້ງການຖືກຕ້ອງ, ຖືກເອື້ອອຳນວຍ, ຫຼືຊນະການສູ້ຮົບເຣື່ອງຊັບສິນເງິນທອງແມ່ນບໍ່ມີຄຸນຄ່າເລີຍ! ພວກເຮົາຮຽນຮູ້ຈາກພຣະຄັມພີວ່າພວກເຮົາສົມຄວນຈະຕ້ອງເປັນຜູ້ສ້າງສັນຕິພາບໃນຄວາມສັມພັນສ່ວນຕົວແລະຄອບຄົວຂອງເຮົາ. **ເລື້ອຍໆ, ສິ່ງນີ້ຮຽກຮ້ອງໃຫ້ມີການເສັຽສລະ.** ອັນນີ້ຈຳເປັນຕ້ອງໄດ້ໃຊ້ຄວາມເຊື່ອແບບອົງພຣະຄຣິດແລະຄວາມໄວ້ວາງໃຈໃນອົງພຣະຜູ້ເປັນເຈົ້າວ່າ: <u>ພຣະອົງຈະຊົງເຮັດວຽກຕາມວິທີທາງແລະວັນເວລາຂອງພຣະອົງ</u>.

*ແມ່ນຜູ້ໃດໃນວົງການຂອງທ່ານ ທີ່ເອົາການແຂ່ງຂັນໄປວູ່ອີກລະດັບນຶ່ງແທ້ໆ?*

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2 ແລະ 3)

### ການສຶກສາພຣະຄັມພີ

### 1. <u>ປະຖົມມະການ 13:5-8</u>

*5. ໂລດຜູ້ເດີນທາງຮ່ວມໄປກັບອັບຣາມກໍມີຝູງແກະ, ຝູງແບ້, ຝູງງົວຄວາຍ ແລະຜ້າເຕັນຈຳນວນຫລາຍ. 6. ເມື່ອເປັນເຊັ່ນນີ້ຄົນລ້ຽງສັດຂອງອັບຣາມ, 7. ແລະຄົນລ້ຽງສັດຂອງໂລດຈຶ່ງຜິດຖຽງກັນເພາະບໍ່ມີທີ່ງຫຍ້າລ້ຽງສັດພຽງພໍເພື່ອໃຫ້ເຂົາທັງສອງຝ່າຍຢູ່ຮ່ວມກັນໄດ້ໃນຄາວນັ້ນຊາວການາອານແລະຊາວເປຣິຊີ ກໍໄດ້ອາໄສຢູ່ທີ່ນັ້ນແລ້ວ. 8. ດັ່ງນັ້ນ, ອັບຣາມຈຶ່ງເວົ້າກັບໂລດວ່າ, "ເຮົາທັງສອງກໍເປັນພີ່ນ້ອງກັນ ຂໍຢ່າໃຫ້ຄົນຂອງເຈົ້າ ແລະຄົນຂອງຂ້ອຍຜິດຖຽງກັນເລີຍ".*

ໃນພຣະຄັມພີ ປະຖົມມະການ ບົດທີ່ 12, ພຣະເຈົ້າໄດ້ຊົງສັນຍາວ່າຈະອວຍພຣະພອນອັບຣາມ ແລະຈະຊົງປະທານດິນແດນອັນກວ້າງໃຫຍ່ໄພສານ, ຊັບສິນ, ຝູງສັດລ້ຽງ, ຄວາມຮັ່ງມີ, ແລະຊົນຊາດຂອງຕົນເອງ. ເຊື້ອສາຍເຜົ່າພັນຂອງອັບຣາມຈະຫຼາຍກວ່າຂີ້ຝຸ່ນແລະເມັດຊາຍໃນທາດ. ເມື່ອອັບຣາມໄດ້ມຸ່ງໜ້າສູ່ດິນແດນແຫ່ງພັນທະສັນຍາຂອງພຣະເຈົ້າ, ລາວໄດ້ເດີນທາງໄປກັບພັລຍາຂອງລາວ-ນາງຊາຣາ, ແລະຫຼານຊາຍຂອງລາວ-ໂລດ. ໃນຂນະທີ່ພວກເຮົາເຂົ້າສຶກສາບົດທີ່ 13, ພຣະເຈົ້າໄດ້ຊົງອວຍພຣະພອນອັບຣາມແລະຫຼານຂອງລາວດ້ວຍຄວາມຮັ່ງມີແລະຝູງສັດລ້ຽງ. <u>ເບິ່ງຄືວ່າອັບຣາມໄດ້ມີຄົບທຸກຢ່າງ</u>. ຍົກເວັ້ນ, ລາວຍັງປາສຈາກລູກຊາຍ, ບໍ່ມີຜູ້ສືບທໍ່ແທນແນວ. ບາງທີລາວຖືກລໍ້ລວງໃຫ້ສົມເຫດສົມຜົນກ່ຽວກັບພຣະສັນຍາຂອງພຣະເຈົ້າກ່ຽວກັບລູກຊາຍແລະເມື່ອອາຍຸ 75 ປີ, ພິຈາລະນາວ່າ **ໂລດ** (ຫຼານຊາຍ) ແມ່ນ "ຄຳຕອບ" ທີ່ເປັນຕົວແທນຕໍ່ຄຳອະທິຖານຂອງລາວ ແລະພຣະສັນຍາຂອງພຣະເຈົ້າ. ເມື່ອ

ເຂົາເຈົ້າໄປຮອດການາອານ, ພຣະຜູ້ເປັນເຈົ້າໄດ້ອວຍພອນອັບຣາມແລະໂລດດ້ວຍຝູງສັດທີ່ນັບມື້ນັບໃຫຍ່ຫຼວງຫຼາຍຂຶ້ນ. ພຣະເຈົ້າຊົງຕັ້ງໃຈໃຫ້ອັບຣາມມີຄວາມຮັ່ງມີແລະດິນແດນອັນກວ້າງຂວາງ. ພຣະເຈົ້າໄດ້ອວຍພອນອັບຣາມ, ຕາມທີ່ພຣະອົງໄດ້ຊົງສັນຍາໄວ້. ໃນຂະນະທີ່ອັບຣາມມີຄວາມສຸກໃນພຣະພອນຈາກພຣະຜູ້ເປັນເຈົ້າທີ່ອຸດົມສົມບູນ, ບັນຫາໄດ້ເກີດຂຶ້ນ: ຄວາມອຸດົມສົມບູນຂອງການລ້ຽງສັດສຳລັບອັບຣາມແລະທີ່ດິນໄດ້ຂະຫຍາຍເຕີບໂຕເກີນຊັບພະຍາກອນທັມມະຊາດຂອງພື້ນທີ່. ແຜ່ນດິນບໍ່ສາມາດລ້ຽງຝູງແກະແລະຝູງສັດໄດ້ອີກຕໍ່ໄປ. ດັ່ງນັ້ນ, ຄົນລ້ຽງແກະແລະຄົນລ້ຽງສັດຈຶ່ງເກີດຄວາມອຸກອັ່ງໃຈເພາະການຂັດຂວາງກັນເອງ ໃນຂະນະທີ່ຕ້ອງຮັບຜິດຊອບໃນໜ້າທີ່ຂອງຕົນ ເຊິ່ງກໍ່ໃຫ້ເກີດການຜິດຖຽງກັນລະຫວ່າງຄົນລ້ຽງສັດ. ການຂັດແຍ້ງກັນໄດ້ເກີດຂຶ້ນລະຫວ່າງຄົນລ້ຽງສັດຂອງອັບຣາມແລະຄົນລ້ຽງສັດຂອງໂລດ.

ອັບຣາມໄດ້ເຮັດສິ່ງທີ່ຖືກຕ້ອງໂດຍການສົນທະນາບັນຫາກັບ ໂລດ ໜ້າຕໍ່ໜ້າ (ເບິ່ງ ມທ 18:15). ອັບຣາມໄດ້ໄປຫາຫຼານຊາຍຂອງລາວເປັນການສ່ວນຕົວເພື່ອໂອ້ລົມໄກ່ເກັ່ຍບັນຫາ ເພື່ອເປັນການໃຫ້ພຣະກຽດພຣະຜູ້ເປັນເຈົ້າໃນສາຍຕາຂອງຊຸມຊົນທ້ອງຖິ່ນ. ໃນລະຫວ່າງການຂັດແຍ້ງນີ້, ບັນດາຊາວການາອານ ແລະຊາວເປຣີໄຊ ໄດ້ອາສັຍຢູ່ໃນດິນແດນແລະຈະໄດ້ເຫັນຄວາມຂັດແຍ້ງລະຫວ່າງອັບຣາມ ກັບ ໂລດ. ຄວາມຂັດແຍ້ງເປັນຜົນມາຈາກສະຖານະການທັມມະຊາດຈາກສະພາບທີ່ແອອັດ, ແຕ່ພຣະຜູ້ເປັນເຈົ້າໄດ້ຊົງໃຊ້ສະຖານະການນັ້ນເພື່ອກ້າວໄປຂ້າງໜ້າ ດ້ວຍພຣະພອນທີ່ມີພຣະປະສົງຂອງພຣະອົງສຳລັບ ອັບຣາມ ເພື່ອສືບທອດແຜ່ນດິນແຫ່ງພັນທະສັນຍາ.

ບາງຄັ້ງ, ການຂັດແຍ້ງ ຫຼື ຄວາມບໍ່ສງົບ ເກີດຂຶ້ນ. ດັ່ງນັ້ນ, ໃນຄວາມບໍ່ສະບາຍຂອງພວກເຮົາ, ພວກເຮົາກ້າວເຂົ້າໃກ້ແຜນການທີ່ພຣະເຈົ້າໄດ້ແຕ່ງຕັ້ງສຳລັບພວກເຮົາ. ນັ້ນແມ່ນສິ່ງທີ່ໄດ້ເກີດຂຶ້ນຕໍ່ຄວາມຂັດແຍ້ງຂອງ ອັບຣາມ ກັບ ໂລດ. ການແຍກຕົວຂອງພວກເພິ່ນໄດ້ເຄື່ອນໄຫວແຜນການມອບພຣະພອນຂອງພຣະເຈົ້າໄປຂ້າງໜ້າ. ອັບຣາມ ຈະຕ້ອງເພິ່ງພາພຣະເຈົ້າຫຼາຍຂຶ້ນເພື່ອຈະໄດ້ມີລູກຊາຍເພື່ອສືບພົ່ງແທນແນວໂດຍຊອບທັມ.

ເຊັ່ນດຽວກັນກັບ ອັບຣາມ, ບັນດາຜູ້ເຊື່ອສົມຄວນໄປຫາກັນເອງ ແລະແກ້ໄຂຂໍ້ຂັດແຍ້ງລະຫວ່າງກັນແລະກັນ ເຊັ່ນດຽວກັບ ອັບຣາມ. ເມື່ອພວກເຮົາປຶກສາຫາລື ກ່ຽວກັບຄວາມຍຸ້ງຍາກຂອງພວກເຮົາກັບຄົນອື່ນ, ພວກເຮົາຄວນປະຕິບັດຕາມຕົວຢ່າງຂອງອັບຣາມໂດຍການຊອກຫາ "<u>ຟື້ນຟູບູຣະນະຄົນຜູ້ນັ້ນ ດ້ວຍຈິດໃຈອ່ອນໂຍນ, ເບິ່ງແຍງຕົນເອງເພື່ອວ່າທ່ານຈະບໍ່ຖືກຫຼອກລວງ</u>." (ຄລຕ 6:1). **ບາງຄັ້ງ, ພຣະພອນທີ່ພວກເຮົາໄດ້ຮັບອາດມາຈາກຄວາມບໍ່ສະບາຍໃຈ; ແຕ່ເຊັ່ນດຽວກັນກັບ ອັບຣາມ, ພວກເຮົາຄວນຈະສງົບແລະໃຈດີ.**

*ທ່ານເຫັນການຄອບຄອງທີ່ເຮັດໃຫ້ເກີດຄວາມຂັດແຍ້ງຢູ່ໃສໃນໂລກປະຈຸບັນນີ້?*

## 2. <u>ປະຖົມມະການ 13:9-11</u>

*9. ສະນັ້ນເຮົາແຍກທາງກັນເສັຽ. ຈົ່ງເລືອກເອົາດິນທີ່ເຈົ້າຕ້ອງການ. ຖ້າເຈົ້າໄປທາງນີ້ຂ້ອຍກໍຈະໄປອີກທາງນຶ່ງ." 10. ໂລດຫຼຽວເບິ່ງທົ່ວໆໄປຈຶ່ງເຫັນວ່າທົ່ງຮາບພຽງຂອງ ແມ່ນໍ້າ ຈໍແດນ ທັງໝົດຈົນເຖິງເມືອງ ໂຊອາ ມີນໍ້າຫຼາຍເໝືອນດັ່ງສວນຂອງພຣະເຈົ້າຫຼືເໝືອນດິນປະເທດເອຢິບ (ກ່ອນທີ່ພຣະຜູ້ເຈົ້າໄດ້ທຳລາຍເມືອງໂຊໂດມແລະເມືອງໂກໂມຣາ ທົ່ງຮາບພຽງນີ້ແມ່ນອຸດົມສົມບູນດີ). 11. ໂລດຈຶ່ງຕັດສິນໃຈເລືອກເອົາທົ່ງຮາບພຽງຂອງແມ່ນໍ້າຈໍແດນທັງໝົດເປັນບ່ອນຢູ່ຂອງຕົນ ແລ້ວເຄື່ອນຂະບວນມຸ້ງໜ້າໄປທາງທິດຕາເວັນອອກ. ສອງຄົນແຍກທາງກັນກໍ່ເປັນດັ່ງນີ້ແຫລະ.*

ອັບຣາມ ພຍາຍາມຫາທາງແກ້ໄຂບັນຫາກັບ ໂລດ ໂດຍສັນຕິວິທີ ເມື່ອເຫັນວ່າຄົນລ້ຽງສັດເລີ່ມຜິດຖຽງກັນ. ອັບຣາມ ຈຶ່ງໄດ້ລິເລີ່ມແກ້ບັນຫາ ແລະຫຼີກລ່ຽງບໍ່ໃຫ້ບັນຫາເກີດຂຶ້ນ. ອັບຣາມໄດ້ໃຫ້ເຫດຜົນກັບ ໂລດ ແລະປຶກສາຫາລືເຖິງທາງເລືອກຂອງພວກເພິ່ນໃນ

ການແຍກທາງແລະກັບໄປທາງໃຜທາງມັນ(ທາງກົງກັນຂ້າມ). ຕລອດການສົນທະນາ, ອັບຣາມຍັງຄົງເວົ້າກົງໄປກົງມາກ່ຽວກັບຄວາມຂັດແຍ້ງ ແລະດຳເນີນການທາງການທູດ(ເຈລະຈາ)ໂດຍການຫາທາງແກ້ໄຂ ແທນທີ່ຈະມົວແຕ່ຄິດວ່າໃຜເປັນຄົນຜິດທີ່ເຮັດໃຫ້ເກີດຄວາມຂັດແຍ້ງນັ້ນ. ອັບຣາມມີນ້ຳໃຈແລະຍອມຕາມໃຈ ໂລດ ໂດຍໃຫ້ລາວເລືອກດິນແດນກ່ອນຕົນເອງ. ໂລດຟ້າວຈັບເອົາໂອກາດໂດຍເປັນຄົນເລືອກກ່ອນ. ລາວໄດ້ເລືອກເອົາຮ່ອມພູຈໍແດນຊຶ່ງເປັນບ່ອນຂຽວອຸ່ມທຸ່ມເພາະມີນ້ຳດີ. ມີການຂາດການຍັບຍັ້ງທີ່ສັງເກດເຫັນໃນໂລດ. ລາວບໍ່ມີຄວາມຄິດທີ່ຈະແບ່ງເຂດທົ່ງພຽງທີ່ຂຽວອຸ່ມທຸ່ມນັ້ນ. ແຜ່ນດິນທີ່ລາວເລືອກແມ່ນ "ເງິນງ່າຍ" ("easy money") ແຕ່ ໂລດມີສາຍຕາສັ້ນ: ລາວເລືອກເອົາຜົນກຳໄລໃນການປົກປ້ອງອະນາຄົດຂອງຄອບຄົວຈາກອິດທິພົນຊົ່ວຮ້າຍຂອງເມືອງໂຊດົມ. ແທນທີ່ ໂລດ ຈະເຊື່ອຟັງຜູ້ເຖົ້າຄົນແກ່ຂອງລາວ-ອັບຣາມ ໂລດ ກັບໄດ້ເບິ່ງອອກໄປ, ເຫັນ, ແລະຄວ້າເອົາຄືກັນກັບຢູ່ໃນສວນເອເດັນ, ບ່ອນທີ່ນາງເອວາ "**ເຫັນວ່າຕົ້ນໄມ້ດີສຳລັບອາຫານແລະໜ້າຍົນດີທີ່ຈະເບິ່ງ, ແລະມັນສົມຄວນສຳລັບການໄດ້ຮັບປັນຍາ. ດັ່ງນັ້ນນາງຈຶ່ງເອົາມາກິນ**" (ປຖກ 3:6). ເຊັ່ນດຽວກັນກັບເອວາໃນສວນເອເດັນ, ໂລດກໍໄດ້ດຳເນີນຊີວິດໂດຍສາຍຕາ(ການມອງເຫັນ). <u>ເຖິງແມ້ນວ່າໂລດເຊື່ອໃນພຣະເຈົ້າແຕ່ລາວເລືອກທີ່ຈະຢູ່ໃກ້ກັບຜີມານຊາຕານ</u>. ໂລດສິ້ນສຸດລົງເຖິງການສູນເສັຽທຸກສິ່ງທຸກຢ່າງແລະອາສັຍຢູ່ໃນຖ້ຳ (ປຖກ 19:30). ລາວສູນເສັຽຊື່ສຽງຂອງລາວ, ພັລຍາຂອງລາວ, ລູກເຂີຍຂອງລາວ, ແລະລູກສາວຂອງລາວທີ່ຍັງມີຊີວິດຢູ່ໄດ້ສູນເສັຽຄວາມຮູ້ສຶກທີ່ໜ້າອັບອາຍ (ລລວ 20:2; ຈຊບ 25:1-3; 1 ກສດ 11:5, 33).

ເຖິງແມ່ນວ່າ ອັບຣາມ ສາມາດໄດ້ຮັບຕຳແໜ່ງເໜືອ ໂລດ ແລະອ້າງເອົາດິນແດນທີ່ລາວເລືອກໄວ້ໄດ້, ແຕ່ລາວວາງຄວາມເຊື່ອໃນພຣະປະສົງຂອງອົງພຣະເຈົ້າ ແລະມໍຣະດົກຂອງລາວ "**ຍັງຄົງຢູ່ຕລອດໄປ**" (ຂໍ້ 17). ອັບຣາມໄດ້ຕິດຕາມພຣະເຈົ້າໂດຍຄວາມເຊື່ອແລະສືບຕໍ່ໃນພຣະພອນຂອງພຣະເຈົ້າ. ເມື່ອລາວແກ່ຊະລາລົງ, ຊັບສິນຂອງລາວເຕີບໃຫຍ່ຂຶ້ນໃນສົມສອດຄອບຄອງ, ຝູງງົວ, ຝູງສັດ, ຄົນຮັບໃຊ້, ແລະຊັບສິນທົ່ວໄປ. ຕລອດການຂັດແຍ້ງຂອງລາວ, ອັບຣາມ ຍັງຄົງດີໃຈແລະສງົບ. ອັບຣາມໄວ້ວາງໃຈ, ໂດຍຄວາມເຊື່ອ, ວ່າພຣະຜູ້ເປັນເຈົ້າຊົງຢູ່ໃນການຄວບຄຸມ. ລາວບໍ່ເຄີຍຍຶດໝັ້ນກັບຄວາມທະເຍີທະຍານທີ່ເຫັນແກ່ຕົວ. <u>ພຣະເຈົ້າໄດ້ຊົງສະແດງພຣະຄຸນແລະຄວາມເມດຕາ</u>. **ອັບຣາມເຕືອນພວກເຮົາໃຫ້ວາງຄວາມຕ້ອງການຂອງຄົນອື່ນກ່ອນຄວາມຕ້ອງການຂອງພວກເຮົາ.**

*ເມື່ອໃດທີ່ທ່ານໄດ້ຮັບຜົນປໂຍດຈາກຄົນທີ່ວາງຄວາມຕ້ອງການຂອງທ່ານກ່ອນຄວາມຕ້ອງການຂອງຕົນເອງ?*

## 3. <u>ປະຖົມມະການ 13:14-18</u>

*14. ຫຼັງຈາກໂລດໄດ້ໜີໄປແລ້ວ ພຣະຜູ້ເປັນເຈົ້າຊົງກ່າວກັບອັບຣາມວ່າ, "ຕັ້ງແຕ່ບ່ອນທີ່ເຈົ້າຢືນຢູ່ນີ້ ຈົ່ງເບິ່ງໄປທົ່ວທຸກທິດໃຫ້ດີ. 15. ດິນທຸກໆບ່ອນທີ່ເຈົ້າແນມເຫັນຢູ່ນີ້ເຮົາຈະໃຫ້ເຈົ້າ ແລະເຊື້ອສາຍຂອງເຈົ້າຢູ່ສືບໆໄປເປັນນິດ. 16. ເຮົາຈະເຮັດໃຫ້ເຊື້ອສາຍຂອງເຈົ້າເພີ່ມທະວີຫຼາຍຂຶ້ນດັ່ງຝຸ່ນດິນ ຖ້າຜູ້ໃດນັບຂີ້ຝຸ່ນດິນໃນໂລກນີ້ໄດ້ຈຶ່ງຈະສາມາດນັບເຊື້ອສາຍຂອງເຈົ້າໄດ້. 17. "ບັດນີ້ຈົ່ງລຸກຂຶ້ນແລ້ວອອກເດີນທາງໄປທົ່ວດິນແດນນີ້ ເພາະວ່າເຮົາຈະໃຫ້ດິນຕອນນີ້ແກ່ເຈົ້າ." 18. ດັ່ງນັ້ນ, ອັບຣາມຈຶ່ງຍົກຍ້າຍຂະບວນໄປຕັ້ງຢູ່ໃກ້ໆກັບຕົ້ນໄມ້ສັກສິດຂອງ ມຳເຣ ທີ່ເມືອງ ເຮັບໂຣນ ໃນທີ່ນັ້ນເພິ່ນໄດ້ສ້າງແທ່ນບູຊາຖວາຍແກ່ພຣະຜູ້ເປັນເຈົ້າ.*

ເພື່ອຈະເຂົ້າໃຈພຣະສັນຍາຂອງພຣະເຈົ້າຕໍ່ອັບຣາມດີຂຶ້ນ, ຂໍຈົ່ງໃຫ້ພິຈາຣະນາພຣະສັນຍາຂອງພຣະເຈົ້າທີ່ໄດ້ຊົງອວຍພຣະພອນເພິ່ນ. ແຕ່ດັ້ງເດີມ, ພຣະເຈົ້າໄດ້ຊົງບອກ ອັບຣາມວ່າ: "ຈົ່ງອອກໄປຈາກແຜ່ນດິນຂອງເຈົ້າ ແລະຈາກພີ່ນ້ອງຂອງເຈົ້າ" (ປຖກ 12:1). ໂລດແມ່ນພີ່ນ້ອງຄົນນຶ່ງ, ຫຼານຂອງເພິ່ນ. ພຣະສັນຍາຂອງພຣະເຈົ້າເບິ່ງຄືວ່າບໍ່ໄດ້ລວມເອົາຍາດພີ່ນ້ອງປະຈຸບັນຂອງອັບຣາມ. <u>ພຣະຜູ້ເປັນເຈົ້າຊົງຮຽກຮ້ອງໃຫ້ມີການເຊື່ອຟັງຢ່າງເຕັມທີ່ ແລະການປະຕິບັດຢ່າງເຕັມທີ່ກັບພຣະດຳຣັດ(ຄຳສັ່ງ)ຂອງພຣະອົງ</u>. ອັບຣາມເປັນຄົນທີ່ມີຄວາມເຊື່ອອັນໃຫຍ່ຫຼວງ, ເປັນຄົນທາງຈິດວິນຍານທີ່ມີຜົນສະທ້ອນອັນໃຫຍ່ຫຼວງ. ແຕ່ເມື່ອພຣະເຈົ້າໄດ້ຊົງສະແດງໃຫ້ອັບຣາມເຫັນດິນແດນຂອງລາວແລະໄດ້ຊົງສັນຍາວ່າ: "**ເຮົາຈະໃຫ້ດິນແດນນີ້ແກ່ລູກຫຼານຂອງເຈົ້າ**" (ຂໍ້ 7), ພຣະອົງບໍ່ໄດ້ຊົງກ່າວເຖິງພີ່ນ້ອງໃນ

ປະຈຸບັນຂອງອັບຣາມ. ມັນບໍ່ແມ່ນຈົນກວ່າ ໂລດ ຈາກໄປທີ່ພຣະເຈົ້າໄດ້ຊົງສະແດງໃຫ້ ອັບຣາມ ເຫັນພຣະພອນອັນເຕັມທີ່ຂອງພຣະອົງ (ເບິ່ງ ປຖກ 13:14-15). ບໍ່ມີວັນສິ້ນສຸດຂອງຄໍາສັນຍາຂອງພຣະເຈົ້າກັບ ອັບຣາມ. ລາວແລະລູກຫຼານຂອງລາວໄດ້ຖືກສັນຍາຈະໄດ້ຮັບພື້ນແຜ່ນດິນນີ້-ຕລອດໄປເປັນນິດ.

*ເປັນຫຍັງການນະມັສການຈຶ່ງເປັນການຕອບສນອງທີ່ດີຕໍ່ການໄດ້ຮັບພຣະພອນຈາກພຣະເຈົ້າ?*

ຈົ່ງພິຈາຣະນາຄວາມອຸທິດຕົນຂອງອັບຣາມ. ຫຼັງຈາກພຣະຜູ້ເປັນເຈົ້າໄດ້ຊົງສັນຍາຈະມອບແຜ່ນດິນທັງໝົດໃຫ້. ອັບຣາມກໍ່ໄດ້ຕອບສນອງດ້ວຍການສ້າງແທ່ນບູຊາອີກແຫ່ງນຶ່ງໃຫ້ແດ່ພຣະຜູ້ເປັນເຈົ້າ. ອັບຣາມມີຄວາມເຊື່ອໃນພຣະຜູ້ເປັນເຈົ້າ, ແລະພຣະຜູ້ເປັນເຈົ້າໄດ້ຊົງຈັດການສ່ວນທີ່ເຫຼືອໃຫ້ສໍາເລັດຮຽບຮ້ອຍ.

*ເມື່ອໃດຜົນລັບຂອງພຣະເຈົ້າໄດ້ດີຫຼາຍກວ່າທີ່ທ່ານໄດ້ຄາດຫວັງໄວ້?*

## ນໍາໃຊ້ໃນຊີວິດ:

ທ່ານຈະປະຕິບັດແນວໃດໃນການໂຕ້ຕອບກັບການສຶກສາວັນນີ້ ເມື່ອທ່ານພົບຂໍ້ຂັດແຍ້ງກັບສະມາຊິກໃນຄອບຄົວ? ທ່ານຈະໃຊ້ຫຼັກການຈາກປະສົບການຂອງ ອັບຣາມ ກັບ ໂລດ ໄດ້ແນວໃດ? ຈົ່ງໃຊ້ນຶ່ງໃນການນໍາໃຊ້ໃນຊີວິດຕໍ່ລົງໄປນີ້:

- **ໄປຫາພຣະເຈົ້າໂດຍກົງ.** ເລີ່ມຕົ້ນໂດຍການພິຈາຣະນາບ່ອນທີ່ທ່ານອາດຈະມີຄວາມຂັດແຍ້ງໃນຄອບຄົວ. ຈົ່ງທູນຂໍຕໍ່ພຣະເຈົ້າສໍາລັບປັນຍາແລະການຊົງຊີ້ນໍາໃນສະຖານະການນີ້.

- **ໄປທີ່ແຫຼ່ງໂດຍກົງ.** ເມື່ອທ່ານຮູ້ເຖິງຄວາມຂັດແຍ້ງທີ່ອາດຈະເກີດຂຶ້ນ, ຈົ່ງເລີ່ມຕົ້ນໂດຍການເຂົ້າໄປຫາບຸກຄົນໂດຍກົງ, ຈົ່ງຊອກຫາທາງອອກໂດຍສັນຕິ. ຈົ່ງຫຼີກເວັ້ນການສົນທະນາບັນຫາກັບຜູ້ອື່ນ,ຍ້ອນວ່າມັນສາມາດເຮັດໃຫ້ສະຖານະການ ຮ້າຍແຮງລົງໄດ້.

- **ໄປໂດຍວິທີທາງການທູດ.** ເມື່ອຜະເຊີນຫນ້າກັນ, ຢ່າໂຕ້ຖຽງກັນ ຫຼື ໂຕ້ຕອບດ້ວຍການສະແດງອອກທາງອາລົມ. ຈົ່ງດໍາເນີນການໄປດ້ວຍເປົ້າໝາຍຂອງພຣະເຈົ້າ: ການບູຣະນະປຸກສ້າງຂຶ້ນໃໝ່ (ມທ 18:15; ຄລຕ 6:1).

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ SSK**